# ບົດຄວາມ:

## ເປັນຫຍັງຈຶ່ງເວົ້າວ່າ "ການຊື້ຮຸ້ນສາມັນແມ່ນການຊື້ທຸລະກິດ"

**ຂຽນໂດຍ:** ນາງ ຕຸ່ນ ເພັດວົງໄຊ
ພະນັກງານວິຊາການ ພະແນກການດຳເນີນ ແລະ ຄຸ້ມຄອງຕິດຕາມຕະຫຼາດ

## ບົດຄວາມ: ເປັນຫຍັງຈິ່ງເວົ້າວ່າ "ການຊື້ຮຸ້ນສາມັນແມ່ນການຊື້ທຸລະກິດ", ທ່ານເຄີຍສົງໃສບໍ່ວ່າ ການຊື້ຮຸ້ນສາມັນ ກັບການເຮັດທຸລະກິດດ້ວຍຕົນເອງມີຂໍ້ດີ-ຂໍ້ເສຍແຕກຕ່າງກັນແນວໃດ?

ປະຕິເສດບໍ່ໄດ້ເລີຍວ່າ ໜຶ່ງໃນເປົ້າໝາຍທີ່ສຳຄັນໃນຊີວິດຂອງຫລາຍໆຄົນ ໂດຍສະເພາະຄົນລຸ້ນໃໝ່ແມ່ນລ້ອນແລ້ວແຕ່ຢາກເປັນເຈົ້າຂອງທຸລະກິດ ແລະ ປະສົບຜົນສຳເລັດໃນເສັ້ນທາງດັ່ງກ່າວ ຄືດັ່ງບັນດາບຸກຄົນທີ່ມີຊື່ສຽງໃນວົງການທຸລະກິດເຊັ່ນ: ມາກ ຊັກເກີເບີກ (Mark Zuckerberg) ເຈົ້າຂອງບໍລິສັດເຟສບຸກທີ່ມີຄົນໃຊ້ຫຼາຍລ້ານຄົນທົ່ວໂລກ, ແຈັກມາ (Jack Mar) ນັກທຸລະກິດຊາວຈີນ ເຈົ້າຂອງບໍລິສັດອາລີບາບາ ທີ່ສ້າງລາຍໄດ້ມະຫາສານຈາກຊ່ອງທາງການຊື້-ຂາຍອອນລາຍ ຫຼື ທ່ານອື່ນໆ. ແຕ່ໃນຕົວຈິງ ການທີ່ຄົນໆໜຶ່ງຈະສາມາດກາຍເປັນເຈົ້າຂອງທຸລະກິດທີ່ປະສົບຜົນສຳເລັດ ແລະ ມີຊື່ສຽງນັ້ນ ບໍ່ແມ່ນເລື່ອງງ່າຍສະເໝີໄປ ທ່ານຈະຕ້ອງອາໄສຄວາມຮູ້,



ປະສົບການ, ທຸ້ມເທແຮງກາຍແຮງໃຈ ແລະ ເວລາສ່ວນຕົວໃຫ້ກັບທຸລະກິດນັ້ນໆ ນັບທັງຕ້ອງແບກຮັບຄວາມສ່ຽງຫຼາຍຢ່າງທີ່ອາດເກີດຂຶ້ນໃນປະຈຸບັນ ແລະ ອະນາຄົດ. ມາຮອດຕອນນີ້ຜູ້ອ່ານອາດຈະມີຂໍ້ສົງໄສວ່າ ຖ້າເຮົາບໍ່ໄດ້ມີຄວາມຮູ້ ຄວາມສາມາດເຖິງຂັ້ນນັ່ງເປັນຜູ້ບໍລິຫານທຸລະກິດໄດ້ ຫຼື ຖ້າເຮົາມີເງິນຈຳນວນໜຶ່ງແຕ່ມັນຍັງບໍ່ພຽງພໍທີ່ຈະດຳເນີນທຸລະກິດ ເຮົາຄວນເຮັດແນວໃດ ເພື່ອຈະສາມາດເປັນເຈົ້າຂອງທຸລະກິດ ແລະ ສາມາດນຳເງິນຂອງເຮົາໄປລົງທຶນໃຫ້ເກີດດອກອອກຜົນໄດ້ ບົດຄວາມນີ້ມີຄຳຕອບໃຫ້ທ່ານ.

ຖ້າທ່ານຢາກເປັນເຈົ້າຂອງທຸລະກິດ ແຕ່ບໍ່ຢາກມານັ່ງບໍລິຫານທຸລະກິດເອງ ຫຼື ຍັງມີເງິນບໍ່ພຽງພໍ, ຜູ້ຂຽນຂໍສະເໜີອີກທາງເລືອກໜຶ່ງໃນການລົງທຶນ ທີ່ຈະເຮັດໃຫ້ທ່ານສາມາດເປັນເຈົ້າຂອງກິດຈະການດີໆໄດ້ໂດຍບໍ່ຕ້ອງນັບໜຶ່ງ ນັ້ນກໍ່ຄືການເລືອກລົງທຶນໃນ ຮຸ້ນສາມັນ. ກ່ອນອື່ນໝົດເຮົາມາທຳຄວາມຮູ້ຈັກ ຮຸ້ນສາມັນກັນກ່ອນ, ຕາມນິຍາມທີ່ ຕະຫຼາດຫຼັກຊັບລາວໄດ້ລະບຸໄວ້ "ຮຸ້ນສາມັນ" ແມ່ນເຄື່ອງມືທາງດ້ານການເງິນປະເພດໜຶ່ງທີ່ອອກຈຳໜ່າຍໂດຍບໍລິສັດມະຫາຊົນເຊິ່ງ ມີຈຸດປະສົງເພື່ອລະດົມທຶນຈາກມວນຊົນມານຳໃຊ້ເຂົ້າ ໃນການດຳເນີນ ແລະ ຂະຫຍາຍທຸລະກິດຂອງຜູ້ອອກຈຳໜ່າຍ ຫຼື ເວົ້າໃຫ້ເຂົ້າໃຈແຈ້ງດ້ວຍຄຳສັບງ່າຍໆກໍ່ຄື ຮຸ້ນໝາຍເຖິງການເປັນເຈົ້າຂອງຮ່ວມໃນບໍລິສັດໃດໜຶ່ງ ຖ້າທຸລະກິດໄປໄດ້ດີ ເຮົາກໍ່ມີສິດໄດ້ຮັບສ່ວນແບ່ງຈາກກຳໄລ, ກົງກັນຂ້າມ ຖ້າທຸລະກິດຂາດທຶນເຮົາກໍ່ຈະຂາດທຶນໄປນຳ ແຕ່ຮຸ້ນທີ່ຈົດທະບຽນໃນຕະຫຼາດຫຼັກຊັບຈະມີຈຸດພິເສດກວ່າຮຸ້ນທົ່ວໄປຂໍ້ໜຶ່ງຄື ນັກລົງທຶນສາມາດຊື້-ຂາຍຮຸ້ນ ປ່ຽນມືກັນໄດ້ຕະຫຼອດເວລາ. ຜູ້ຂຽນຈະຍົກຕົວຢ່າງກ່ຽວກັບຮຸ້ນ ເພື່ອໃຫ້ເຂົ້າໃຈງ່າຍຂຶ້ນຄື ຖ້າທ່ານອອກເງິນກັບໝູ່ຄົນລະເຄິ່ງ ເພື່ອສ້າງຮ້ານເຂົ້າປຽກ ທ່ານຈະມີສິດໃນການເປັນ

ເຈົ້າຂອງຮ້ານເຂົ້າປຽກເຄິ່ງໜຶ່ງ ແລະ ອີກເຄິ່ງໜຶ່ງແມ່ນເປັນຂອງໝູ່ທ່ານ, ກຳໄລທີ່ໄດ້ຈາກການຂາຍເຂົ້າປຽກຈະແບ່ງເປັນ 2 ສ່ວນເທົ່າກັນ, ແຕ່ຖ້າຫາກມື້ໃດທີ່ທ່ານຕ້ອງການປັບປຸງຮ້ານ ຫຼື ຂະຫຍາຍກິດຈະການ ແຕ່ບໍ່ມີເງິນ ແລະ ທ່ານກໍບໍ່ຢາກກູ້ຢືມເງິນຈາກທະນາຄານທີ່ຕ້ອງຈ່າຍດອກເບ້ຍ ແລະ ຕ້ອງມີຫຼັກຊັບມາຄ້ຳປະກັນ ທ່ານກໍ່ສາມາດນຳຮຸ້ນຈຳນວນໜຶ່ງຂອງບໍລິສັດໄປຂາຍໃຫ້ຄົນທີ່ຕ້ອງການປະກອບທຶນ ແລກກັບສິດໃນການເປັນເຈົ້າຂອງຮ້ານກາເຟຕາມສັດສ່ວນທີ່ເຂົາເຈົ້າໄດ້ລົງທຶນໄປເພື່ອນຳເງິນນັ້ນມາລົງທຶນ, ເຊິ່ງສ່ວນທີ່ຂາຍອອກໄປນັ້ນເອງ ເອີ້ນວ່າ ຮຸ້ນສາມັນ (ນີ້ເປັນພຽງຕົວຢ່າງປະກອບເພື່ອໃຫ້ເຂົ້າໃຈງ່າຍ ແຕ່ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ບໍລິສັດທີ່ຕ້ອງການລະດົມທຶນ ຕ້ອງເປັນບໍລິສັດມະຫາຊົນ ທີ່ໄດ້ຮັບອະນຸຍາດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເທົ່ານັ້ນ). ຄຳຖາມຕໍ່ໄປທີ່ຜູ້ອ່ານອາດຈະຢາກຮູ້ກໍ່ຄື ນອກຈາກສິດໃນການເປັນເຈົ້າຂອງກິດຈະການແລ້ວ ທ່ານຈະໄດ້ຮັບຫຍັງແດ່ຫຼາຍກວ່ານັ້ນ ຜົນປະໂຫຍດຂອງການລົງທຶນໃນຮຸ້ນສາມັນທີ່ທ່ານຈະໄດ້ຮັບມີດັ່ງນີ້:



- **ໄດ້ຮັບເງິນປັນຜົນ:** ເມື່ອບໍລິສັດທີ່ເຮົາຊື້ຮຸ້ນໄປສາມາດສ້າງກຳໄລໄດ້ ບໍລິສັດກໍ່ຈະແບ່ງສ່ວນຂອງກຳໄລ (ເງິນປັນຜົນ) ໃຫ້ແກ່ຜູ້ຖືຮຸ້ນຕາມສັດສ່ວນທີ່ເຂົາເຈົ້າຖືຄອງ. ບໍລິສັດສ່ວນໃຫຍ່ໃນ ຕລຊລ ຈະຈ່າຍເງິນປັນຜົນ 1 ຄັ້ງຕໍ່ປີ ຍົກເວັ້ນບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ຈ່າຍ 2 ຄັ້ງຕໍ່ປີ, ເຊິ່ງການຈ່າຍເງິນປັນຜົນແມ່ນຂຶ້ນຢູ່ກັບຜົນການດຳເນີນກິດຈະການ ແລະ ນະໂຍບາຍຂອງບໍລິສັດ.
- **ກຳໄລຈາກການຊື້-ຂາຍ:** ລາຄາຮຸ້ນຈະມີການເໜັງຕີງຕະຫຼອດເວລາ ເຊິ່ງຂຶ້ນກັບກົນໄກຕະຫຼາດ, ນັກລົງທຶນສາມາດສ້າງກຳໄລຈາກການຊື້-ຂາຍໄດ້ ເຊິ່ງຈະເກີດຂຶ້ນເມື່ອສາມາດຂາຍຮຸ້ນໄດ້ໃນລາຄາທີ່ສູງກວ່າລາຄາຊື້.
- **ມີສ່ວນຮ່ວມເປັນເຈົ້າຂອງກິດຈະການ:** ຜູ້ຖືຮຸ້ນຈະມີສ່ວນຮ່ວມໃນການບໍລິຫານບໍລິສັດຕາມສັດສ່ວນຂອງຮຸ້ນທີ່ຕົນຖືໂດຍການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນເພື່ອລົງຄະແນນສຽງໃນການຕັດສິນບັນຫາສຳຄັນຕ່າງໆຂອງກິດຈະການ, ຜູ້ຖືຮຸ້ນ 1 ຮຸ້ນມີສິດອອກສຽງ 1 ສຽງ.



- **ຈອງຊື້ຮຸ້ນອອກໃໝ່:** ຜູ້ຖືຮຸ້ນຂອງບໍລິສັດໃດໜຶ່ງ ອາດຈະໄດ້ຮັບສິດທິພິເສດໃນການຈອງຊື້ຮຸ້ນທີ່ອອກໃໝ່ຂອງກິດຈະການ ອາດຈະເປັນໃນຮູບແບບໃຫ້ຈອງຊື້ກ່ອນ ແລະ/ຫຼື ໄດ້ຮັບສ່ວນຫຼຸດພິເສດຕໍ່ລາຄາຮຸ້ນໃໝ່.

ມາຮອດນີ້ຜູ້ອ່ານອາດຈະພໍສຳນຶກພາບອອກແລ້ວວ່າ ຜົນປະໂຫຍດທີ່ທ່ານຈະໄດ້ຮັບຈາກການຊື້ຮຸ້ນສາມັນມີຄືແນວໃດເພື່ອເປັນການທຳຄວາມເຂົ້າໃຈໃນຂັ້ນຕໍ່ໄປ ຜູ້ຂຽນຈະຍົກໃຫ້ເຫັນຂໍ້ດີ-ຂໍ້ເສຍຂອງການເຮັດທຸລະກິດດ້ວຍຕົນເອງ ແລະ ການເປັນເຈົ້າຂອງທຸລະກິດດ້ວຍການຊື້ຮຸ້ນສາມັນເພີ່ມຕື່ມ. ດັ່ງທີ່ຮູ້ກັນຢູ່ແລ້ວຖ້າທ່ານເປັນເຈົ້າຂອງທຸລະກິດເອງ ອຳນາດໃນການຄວບຄຸມ ແລະ ສິດໃນການຕັດສິນໃຈແມ່ນເປັນຂອງທ່ານ 100% ແລະ ຖ້າທຸລະກິດໄປໄດ້ດີ ທ່ານກໍ່ຈະໄດ້ຮັບກຳໄລເຕັມສ່ວນ, ກົງກັນຂ້າມ ການດຳເນີນທຸລະກິດຍັງຖືວ່າມີຄວາມສ່ຽງຂ້ອນ

ຂ້າງສູງ, ຕ້ອງການເງິນທຶນສູງ ແລະ ທ່ານຍັງຕ້ອງທຸ່ມເທເວລາ, ແຮງກາຍແຮງໃຈ ເພື່ອບໍລິຫານວຽກ ບໍລິຫານຄົນໃຫ້ໄດ້ປະສິດທິພາບສູງສຸດ. ສໍາລັບການຊື້ຮຸ້ນສາມັນແມ່ນທ່ານບໍ່ຈໍາເປັນຕ້ອງໄປນັ່ງບໍລິຫານທຸລະກິດເອງ ທ່ານສາມາດເລືອກຊື້ຮຸ້ນຂອງທຸລະກິດໃນອຸດສາຫະກໍາໃດກໍ່ໄດ້ທີ່ທ່ານສົນໃຈ ແລະ ຍັງໃຊ້ເງິນລົງທຶນບໍ່ສູງທຽບໃສ່ການລົງທຶນຮູບແບບອື່ນ ເຊັ່ນ: ການເຮັດທຸລະກິດດ້ວຍຕົນເອງ, ຝາກເງິນເປັນປະຈໍາໃນທະນາຄານ (ປັດຈຸບັນຮຸ້ນທີ່ມີລາຄາຕໍ່າສຸດໃນ ຕລຊລ ແມ່ນ 480 ກີບ/ຮຸ້ນ ແລະ ສູງສຸດແມ່ນ 6,250 ກີບ/ຮຸ້ນ, ລາຄາໃນວັນທີ 14/12/2020) ໝາຍວ່າທ່ານມີເງິນເລີ່ມຕົ້ນ ພຽງແຕ່ 48,000 ກີບກໍ່ສາມາດຊື້ຮຸ້ນໄດ້ (ຫົວໜ່ວຍການຊື້-ຂາຍ ຕໍ່າສຸດໃນ ຕລຊລ ແມ່ນ 100 ຮຸ້ນ). ນອກຈາກນີ້ ຮຸ້ນສາມັນຍັງສາມາດຖືຄອງໄດ້ດົນຕາມທີ່ທ່ານຕ້ອງການ ພ້ອມທັງສາມາດຊື້-ຂາຍປ່ຽນມືເພື່ອເກັງກໍາໄລໄດ້ອີກດ້ວຍ. ແຕ່ເຖິງຢ່າງໃດກໍ່ຕາມ ນັກລົງທຶນຄວນຄໍານຶງໄວ້ສະເໝີວ່າທຸກການລົງທຶນມມີຄວາມສ່ຽງ, ການລົງທຶນໃນຮຸ້ນສາມັນ ເຖິງຈະມີຂໍ້ດີຫຼາຍຢ່າງ ແຕ່ຜູ້ຖືຮຸ້ນລາຍນ້ອຍອາດບໍ່ມີອໍານາດໃນການຕັດສິນໃຈເທົ່າກັບຜູ້ຖືຮຸ້ນລາຍໃຫຍ່ ບາງຄັ້ງຜົນຕອບແທນອາດບໍ່ແນ່ນອນ ແລະ ກໍາໄລບໍ່ສູງຖ້າທຽບໃສ່ການເຮັດທຸລະກິດເອງ, ສະນັ້ນຜູ້ລົງທຶນຄວນເອົາໃຈໃສ່ສຶກສາຫາຄວາມຮູ້ໃຫ້ດີກ່ອນການຕັດສິນໃຈລົງທຶນ ຖ້າມີຄວາມຮູ້ພຽງພໍແລ້ວ ການລົງທຶນໃນຮຸ້ນຈະບໍ່ເປັນເລື່ອງຍາກອີກຕໍ່ໄປ. ມາຮອດນີ້ຜູ້ອ່ານອາດຈະພໍເຂົ້າໃຈແລ້ວວ່າ ການຊື້ຮຸ້ນສາມັນມີຂໍ້ດີ ແລະ ຂໍ້ເສຍແນວໃດແດ່ ເມື່ອທຽບກັບການເຮັດທຸລະກິດດ້ວຍຕົນເອງຜູ້ຂຽນເອງບໍ່ສາມາດຕັດສິນແທນຜູ້ອ່ານໄດ້ວ່າ ການລົງທຶນແບບໃດດີກວ່າກັນ ເພາະມັນຂຶ້ນກັບດຸນພິນິດໃນການຕັດສິນໃຈ, ເປົ້າໝາຍໃນການລົງທຶນ, ຄວາມມັກ ແລະ ຄວາມສາມາດແບກຮັບຄວາມສ່ຽງທີ່ຕ່າງກັນຂອງແຕ່ລະຄົນ.




ການລົງທຶນໃນຮຸ້ນສາມາດສ້າງກໍາໄລໄດ້ ຖ້າທ່ານຮູ້ຈັກເລືອກລົງທຶນໃນຮຸ້ນທີ່ດີ ຫຼື ໃນຕະຫຼາດຮຸ້ນເອີ້ນວ່າ “Blue Chip Company” ເພື່ອເຮັດໄດ້ຄືແນວນັ້ນ ຜູ້ຂຽນຈຶ່ງມີຂໍ້ແນະນໍາ ຫຼື ຂໍ້ສັງເກດ ສໍາລັບຜູ້ທີ່ຕ້ອງການເລີ່ມລົງທຶນໃນຮຸ້ນສາມັນ ຫຼື ກໍາລັງຊອກຫາບໍລິສັດດີໆ ເພື່ອລົງທຶນໃນໄລຍະຍາວ ຫຼື ເກັງກໍາໄລໃນໄລຍະສັ້ນ ຄື:




1. ເປັນບໍລິສັດທີ່ມີຂໍ້ໄດ້ປຽບດ້ານການແຂ່ງຂັນ, ເປັນຜູ້ນໍາຕະຫຼາດ ແລະ ມີຈຸດແຂງໃນການດໍາເນີນທຸລະກິດເຊັ່ນ: ມີແຜນທຸລະກິດທີ່ດີ, ມີນະວັດຕະກໍາໃໝ່ໆ ຫຼື ມີຖານລູກຄ້າທີ່ຫຼາຍ.

2. ມີຜົນການດໍາເນີນທຸລະກິດທີ່ດີ ຕໍ່ເນື່ອງກັນຢ່າງໜ້ອຍ 3-5 ປີ, ທ່ານຮູ້ບໍ່ວ່ານັກລົງທຶນທີ່ມີຊື່ສຽງທີ່ສຸດໃນວົງການຊື້-ຂາຍຮຸ້ນ ທ່ານ ວໍເຣນ ບຸບເຟດ (Warren Buffett), ກ່ອນທີ່ລາວຈະຕັດສິນໃຈຊື້ຮຸ້ນໃດໜຶ່ງ ແມ່ນຈະຕ້ອງໄດ້ສຶກສາຜົນການດໍາເນີນທຸລະກິດຍ້ອນຫຼັງຂອງບໍລິສັດນັ້ນໆໄປເຖິງ 10 ປີ, ເພາະເຊື່ອວ່າໃນ 10 ປີໃດໜຶ່ງແມ່ນຈະມີວິກິດການເສດຖະກິດເກີດຂຶ້ນຮອບໜຶ່ງ.

3. ບໍລິສັດຕ້ອງມີໜີ້ສິນບໍ່ສູງ ແນ່ນອນວ່າການເຮັດທຸລະກິດກັບການສ້າງໜີ້ ແມ່ນເປັນສິ່ງທີ່ລີກລ່ຽງບໍ່ໄດ້, ແຕ່ສິ່ງທີ່ຕ້ອງລະວັງຄື ບໍລິສັດບໍ່ຄວນມີໜີ້ສິນໃນໄລຍະຍາວຫຼາຍເກີນໄປ ເພາະຈະເກີດຄວາມສ່ຽງໃນອະນາຄົດ, ທ່ານສາມາດສັງເກດໄດ້ຈາກອັດຕາສ່ວນໜີ້ສິນຕໍ່ທຶນ (D/E Ratio) ໂດຍທົ່ວໄປແລ້ວບໍ່ຄວນເກີນ 1.5 ເທົ່າ.
4. ມີການບໍລິຫານບໍລິສັດ (Corporate Governance) ທີ່ດີ, ມີຄວາມໂປ່ງໃສ, ມີພາບພົດບໍລິສັດທີ່ດີ ແລະ ມີການເປີດເຜີຍຂໍ້ມູນຂອງບໍລິສັດທີ່ເປັນປະໂຫຍດໃຫ້ແກ່ນັກລົງທຶນຢ່າງເປັນປະຈຳ.

ສະຫຼຸບລວມແລ້ວ ການຊື້ຮຸ້ນສາມັນ ປຽບເໝືອນການເປັນເຈົ້າຂອງທຸລະກິດ ໂດຍທີ່ທ່ານບໍ່ຕ້ອງເລີ່ມຕົ້ນນັບໜຶ່ງ, ບໍ່ຕ້ອງໃຊ້ເງິນໃນການລົງທຶນສູງ ແລະ ຍັງສາມາດເລືອກຊື້ຮຸ້ນໄດ້ບໍ່ຈຳກັດ. ການທີ່ທ່ານມີຮຸ້ນສາມັນຂອງບໍລິສັດໃດໜຶ່ງຢູ່ໃນມື ໝາຍເຖິງທ່ານມີສິດໃນການອອກສຽງ, ມີສິດໃນການໄດ້ຮັບເງິນປັນຜົນ, ສິດໃນການຈອງຊື້ຮຸ້ນອອກໃໝ່ ແລະ ຍັງສາມາດເກັງກຳໄລໄດ້ຈາກການຊື້-ຂາຍຮຸ້ນອີກດ້ວຍ. ຫາກທ່ານໝັ່ນສຶກສາຫາຄວາມຮູ້, ຕິດຕາມຂ່າວສານຂອງບໍລິສັດທີ່ຕ້ອງການລົງທຶນ ແລະ ເລືອກລົງທຶນໃນຮຸ້ນທີ່ດີ ແມ່ນຈະຊ່ວຍສ້າງໂອກາດໃນການສ້າງກຳໄລຈາກການລົງທຶນໃນຮຸ້ນໄດ້. ຜູ້ຂຽນຫວັງຢ່າງຍິ່ງວ່າບົດຄວາມນີ້ຈະຊ່ວຍໃຫ້ທັດສະນະຄະຕິຕໍ່ການລົງທຶນໃນຮຸ້ນຂອງຜູ້ອ່ານບໍ່ເປັນສິ່ງທີ່ຫຍຸ້ງຍາກສັບສົນ ແລະ ບໍ່ເປັນເລື່ອງທີ່ໄກຕົວຂອງທ່ານອີກຕໍ່ໄປ.

## *ເອກະສານອ້າງອີງ*

1. ກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງປີ 2019
2. ຫ້ອງຮຽນການລົງທຶນອອນລາຍຫົວຂໍ້ "ມືໃໝ່ເລີ່ມລົງທຶນ" ຕະຫຼາດຫຼັກຊັບໄທ (https://www.set.or.th/)